ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ 3639----

ຫ້ອງການ ເລກທີ / ຫກ

ນະຄອນຫຼວງວຽງຈັນ, ວັນທີ 3 ກໍລະກົດ 2024

# ໜັງສືເຊີນເຂົ້າຮ່ວມປະມູນ

1. ກະຊວງສຶກສາທິການ ແລະ ກິລາ ໄດ້ນຳໃຊ້ເງິນງົບປະມານລັດ ປະຈຳປີ 2024 ເພື່ອດຳເນີນການປະມູນເປີດກວ້າງພາຍໃນ ກ່ຽວກັບການຈັດຊື້ອຸປະກອນເຄື່ອງກິລາ, ຊຸດກິລາ ແລະ ອຸປະກອນ ຮັບໃຊ້ວຽກງານບໍລິຫານຂອງກຳມະການກອງເລຂາ ງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ 7 ທີ່ແຂວງສາລະວັນ ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດດ້ານການສະໜອງເຄື່ອງກິລາ ແລະ ເຄື່ອງໃຊ້ຫ້ອງການ ແລະ ໃບມອບພັນທະອາກອນ ປະຈຳປີ 2023 ທີ່ຖືກຕ້ອງຕາມກົດໝາຍ;
4. ບໍລິສັດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າສັງລວມ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ໂທລະສັບ 021 216017, 020 98983434 ໃນໂມງລັດຖະການ, ເລີ່ມຂາຍຊອງປະມູນແຕ່ວັນທີ 08 ກໍລະກົດ 2024 ຫາ 19 ສິງຫາ 2024, ໃນລາຄາ 1.000.000 ກີບ/ຊອງ, ຈຳນວນເງິນດັ່ງກ່າວ ຈະບໍ່ມີການສົ່ງຄືນ (ວິທີຊຳລະຕ້ອງຈ່າຍເປັນເງິນສົດ);
5. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 19 ສິງຫາ 2024 ທີ່ຫ້ອງປະຊຸມກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຊັ້ນ 04 (ຫ້ອງ 414) ຕຶກກະຊວງສຶກສາທິການ ແລະ ກິລາ, ເຂດສະໜາມກິລາເຈົ້າອານຸວົງ. ຊອງປະມູນໃດສົ່ງຊ້າເກີນເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້ ກະຊວງສຶກສາທິການ ແລະ ກິລາ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ;
6. ຜູ້ປະມູນຕ້ອງມີເງິນຄ້ຳປະກັນຊອງປະມູນໃນອັດຕາ 2% ຂອງມູນຄ່າທີ່ສະເໜີໃນການປະມູນ ເປັນໜັງສືຄ້ຳປະກັນ ຈາກທະນາຄານ.

ເຊັນແທນ ຫົວໜ້າຫ້ອງການ

ຫ້ອງການ

ສົມສີ ສຸດທິວົງ

สแกนด้วย CamScanner